Moms in Prayer INTERNATIONAL
ກຸ່ມອະທິຖານສາກົນຂອງບັນດາແມ່

# ພຣະເຈົ້າຊົງເປັນພຣະຜູ້ສ້າງ

**ສັນລະເສີນ**—ຍ້ອງຍໍສັນລະເສີນໃນຄວາມເປັນພຣະເຈົ້າ, ໃນຄຸນລັກສະນະ, ໃນພຣະນາມ ຫຼື ໃນພຣະລັກສະນະຂອງພຣະອົງ. *ບໍ່ມີການຂໍໃນການອະທິຖານເທື່ອ.*

**ພຣະລັກສະນະ: ພຣະເຈົ້າຊົງເປັນພຣະຜູ້ສ້າງ** **Attribute: God Is the Builder**

**ຄວາມໝາຍ**: ເປັນຜູ້ກໍ່ຕັ້ງ, ເພີ່ມພູນ, ຫຼື ເສີມກຳລັງ; ເປັນຜູ້ປັ້ນແຕ່ງ ຫຼື ສ້າງຂຶ້ນມາ

**ຂໍ້ພະຄຳພີ**:

- **ເຢເຣມີຢາ 31:3-4** ອົງພຣະຜູ້ເປັນເຈົ້າປາກົດແກ່ເຮົາໃນອະດີດ, ຊົງເວົ້າວ່າ: " ເຮົາໄດ້ຮັກພວກເຈົ້າດ້ວຍຄວາມຮັກທີ່ບໍ່ມີວັນສູນສິ້ນ; ເຮົາໄດ້ເອີ້ນເອົາພວກເຈົ້າດ້ວຍຄວາມປາດຖະໜາດີທີ່ສຸດ. ເຮົາຈະສ້າງພວກເຈົ້າຂຶ້ນໃໝ່, ຊາດອິດສະລາເອນເອີຍ. ພວກເຈົ້າຈະກັບມາຕີກອງ ແລະ ຟ້ອນລຳດ້ວຍຄວາມຊື່ນຊົມຍິນດີຮ່ວມກັນອີກຄັ້ງ."
- **ເພງສັນລະເສີນ 127:1** ຖ້າອົງພຣະຜູ້ເປັນເຈົ້າບໍ່ກໍ່ບ້ານສ້າງເຮືອນ, ວຽກງານຄົນກໍ່ສ້າງກໍບໍ່ເກີດຜົນ. ຖ້າອົງພຣະຜູ້ເປັນເຈົ້າບໍ່ເບິ່ງແຍງປົກປ້ອງເມືອງ, ທະຫານຍືນຍາມກໍໄຮ້ປະໂຫຍດ.
- **ສຸພາສິດ 24:3** ດ້ວຍປັນຍາເຮືອນຈຶ່ງຖືກສ້າງຂຶ້ນໄດ້, ແລະ ດ້ວຍຄວາມເຂົ້າໃຈເຮືອນນັ້ນຈຶ່ງສ້າງສຳເລັດຜົນ.
- **ເອເຟໂຊ 4:11-16** ພຣະອົງເຈົ້າໄດ້ໃຫ້ຂອງປະທານແກ່ແຕ່ລະຄົນກໍຄືໃຫ້ບາງຄົນເປັນອັກຄະສາວົກ, ບາງຄົນເປັນຜູ້ປະກາດພຣະທຳ, ບາງຄົນເປັນຜູ້ປະກາດຂ່າວປະເສີດ, ເປັນສິດຍາພິບານ ແລະ ອາຈານສອນ, ເພື່ອຈັດຕຽມໄພ່ພົນທັງຫຼາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ດີ, ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເລີນຂຶ້ນ ຈົນກ່ວາເຮົາທຸກຄົນຈະບັນລຸຄວາມເປັນນ້ຳໜຶ່ງໃຈດຽວກັນໃນຄວາມເຊື່ອ ແລະ ໃນຄວາມຮູ້ເຖິງເລື່ອງພຣະບຸດຂອງພຣະເຈົ້າ ແລ້ວກາຍເປັນຜູ້ໃຫຍ່ໃນຄວາມຄິດ, ສາມາດເຂົ້າເຖິງຄວາມສົມບູນຂອງພຣະຄຣິດ. ແລ້ວພວກເຮົາຈະບໍ່ເປັນເດັກນ້ອຍອີກຕໍ່ໄປ, ຈະບໍ່ຖືກພັດໄປມາ ຫຼື ຫັນເຫໄປມາດ້ວຍລົມປາກແຫ່ງຄຳສັ່ງສອນຂອງຄົນຫຼອກລວງ ຜູ້ທີ່ນຳຄົນອື່ນໃຫ້ຫລົງຜິດໄປດ້ວຍກົນອຸບາຍຕົວະຍົວະອັນສະຫຼາດຂອງພວກເຂົາ. ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກເພື່ອເຮົາຈະໄດ້ຈະເລີນຂຶ້ນທຸກດ້ານໃນພຣະຄຣິດຜູ້ເປັນຫົວ. ໂດຍພຣະອົງນັ້ນທຸກພາກສ່ວນໃນຮ່າງກາຍໄດ້ຕິດພັນແລະຊຸກຍູ້ເຊິ່ງກັນແລະກັນ ຈຶ່ງສາມາດຈະເລີນໃຫຍ່ຂຶ້ນດ້ວຍຄວາມຮັກ, ດ້ວຍວ່າອະໄວຍະວະທຸກພາກສ່ວນໄດ້ຕັ້ງໜ້າເຮັດໜ້າທີ່ຂອງຕົນ.

**ການສາລະພາບບາບ**—ໃຫ້ສາລະພາບບາບຂອງເຈົ້າຢ່າງງຽບໆຕໍ່ພະເຈົ້າຜູ້ຊົງໃຫ້ອະໄພ.
ຖ້າເຮົາສາລະພາບຄວາມບາບຂອງພວກເຮົາ,ພຣະອົງຊົງສັດຊື່ແລະທ່ຽງທຳທີ່ຈະໃຫ້ອະໄພການບາບເຫຼົ່ານັ້ນ, ທັງຍັງສຳລະເຮົາໃຫ້ຂາວສະອາດຈາກການອະທຳທັງປວງ. 1 ໂຢຮັນ 1:9

**ການຂອບພະຄຸນ**—ໃຫ້ຂອບໃຈພະເຈົ້າສຳລັບສິ່ງທີ່ພະອົງໄດ້ຊົງກະທຳ. ບໍ່ມີການຮ້ອງຂໍໃນການອະທິຖານເທື່ອ.
ໃນທຸກໆສິ່ງຢ່າງ ຈົ່ງຂອບພະຄຸນ; ເພາະນີ້ຄືເຊິ່ງທີ່ພະເຈົ້າຕ້ອງການຈາກເຮົາທີ່ຢູ່ໃນພຣະເຢຊູຄຣິດເຈົ້າ. 1 ເທສະໂລນິກ 5:18

**ການເຂົ້າຫາພະເຈົ້າແທນຜູ້ອື່ນ**—ນີ້ເປັນການອະທິຖານຫາພະເຈົ້າແທນຜູ້ອື່ນຫຼືເພື່ອຄົນອື່ນ.ໃຫ້ຕັ້ງກຸ່ມອະທິຖານ2-3 ຄົນ.

**ລູກໆຂອງພວກເຮົາ**—ແມ່ແຕ່ລະຄົນເລືອກລູກຄົນໜຶ່ງທີ່ຈະອະທິຖານເພື່ອ. ທຳອິດໃຫ້ອະທິຖານຕາມພະຄຳພີ ແລ້ວອະທິຖານຂໍສິ່ງທີ່ຕ້ອງການເພື່ອລູກຄົນນັ້ນ.

**ຂໍ້ພະຄຳພີ**: ກິດຈະການ 20:32

**ຄຳອະທິຖານຕາມພະຄຳພີ**: ບັດນີ້ ຂ້ານ້ອຍຂໍຝາກ (ຊື່ຂອງລູກ) ໄວ້ກັບພຣະເຈົ້າ ແລະ ໄວ້ກັບພຣະທຳອັນເຕັມໄປດ້ວຍພຣະຄຸນ, ເຊິ່ງພຣະທຳນັ້ນມີອຳນາດທີ່ຈະເສີມສ້າງລາວຂຶ້ນໄດ້ ເພື່ອໃຫ້ລາວໄດ້ຮັບມໍລະດົກເຊິ່ງພຣະເຈົ້າມີໄວ້ສຳລັບທຸກຄົນທີ່ຖືກຊຳລະແລ້ວ.

**ຄຳຮ້ອງຂໍສະເພາະເຈາະຈົງ:**

**ຄູ ຫຼື ພະນັກງານ**—ໃຊ້ຂໍ້ພະຄຳພີຂ້າງລຸ່ມນີ້ ຫຼື ຂໍ້ພະຄຳສຳລັບລູກໆ ເພື່ອອະທິຖານເພື່ອຄູ/ພະນັກງານຄົນໃດໜຶ່ງ. ແລ້ວອະທິຖານຂໍສິ່ງສະເພາະເຈາະຈົງເພື່ອຄົນໆນັ້ນ.

- ຂໍພະເຈົ້າເປີດຕາ __________ ແລະ ປ່ຽນລາວໃຫ້ຫັນຈາກຄວາມມືດສູ່ແສງສະຫວ່າງ, ຈາກການຢູ່ໃຕ້ອຳນາດຂອງມານຊາຕານ ສູ່ການເພິ່ງພາລິດເດດຂອງພຣະຜູ້ເປັນເຈົ້າ, ເພື່ອລາວຈະໄດ້ຮັບການອະໄພບາບ ແລະ ກາຍເປັນໜຶ່ງໃນຜູ້ທີ່ຖືກຊ່ວຍໃຫ້ພົ້ນໂດຍຄວາມເຊື່ອໃນພຣະເຢຊູ. *ກິດຈະການ 26:18*

## ບັນຫາເລື່ອງໂຮງຮຽນ:

1. ອະທິຖານໃຫ້ມີການຟື້ນຟູຝ່າຍວິນຍານໃນໂຮງຮຽນ.
2. ອະທິຖານຂໍການປົກປ້ອງໃຫ້ແກ່ຄູອາຈານ ແລະ ນັກຮຽນທັງຫຼາຍ.
3. ອະທິຖານເພື່ອບັນຫາຕ່າງໆໃນໂຮງຮຽນ.

## ບັນດາແມ່ໆອະທິຖານເພື່ອ:

1. ອະທິຖານເພື່ອໂຮງຮຽນຕ່າງໆທົ່ວໂລກ, ແລະ ກຸ່ມຕ່າງໆໃຫ້ຕັ້ງໝັ້ນຄົງ.
2. ຂໍການປົກປ້ອງເພື່ອພັກລັດ ການຮັບໃຊ້ຕ່າງໆ ໃຫ້ມີຄວາມສັດຊື່ບໍລິສຸດ ແລະ ບໍ່ແຕກແຍກກັນ.

***ຈື່ໄວ້ວ່າ, ສິ່ງທີ່ອະທິຖານຢູ່ໃນກຸ່ມ ຄວນຈະຖືກເກັບໄວ້ໃນກຸ່ມເທົ່ານັ້ນ!***